## ກະຊວງກະສິກຳ ແລະ ສິ່ງແວດລ້ອມ

**ໂຄງການປັບປຸງຊີວິດການເປັນຢູ່ ແລະ ການປັບຕົວກັບການປ່ຽນແປງດິນຟ້າອາກາດ (ປຊກ)**

ເງິນກູ້ເລກທີ: IDA No.673580-LA ແລະ IDA No.73590-LA, ລະຫັດໂຄງການ. P178545 (SDC)

# ປະກາດຮັບສະໝັກພະນັກງານ ປະຈຳຫ້ອງການໂຄງການ ປຊກ ຂັ້ນເມືອງ.

Request for Expression of Interest (REOI)

ລັດຖະບານ ສປປ ລາວ ໄດ້ຮັບທຶນກູ້ຢືມ ຈາກສະມາຄົມພັດທະນາສາກົນ (IDA) ຂອງທະນາຄານໂລກ ແລະ ໄດ້ຮັບທຶນຊ່ວຍເຫຼືອລ້າຈາກ ອົງການເພື່ອການພັດທະນາ ແລະ ການຮ່ວມມື ແຫ່ງປະເທດສະວິດສແລນ (ອົງການ SDC) ເພື່ອຈັດຕັ້ງປະຕິບັດໂຄງການປັບປຸງຊີວິດການເປັນຢູ່ ແລະ ການປັບຕົວກັບການປ່ຽນແປງດິນຟ້າອາກາດ (ປຊກ) ແລະ ມີຈຸດປະສົງທີ່ຈະນຳໃຊ້ທຶນສ່ວນໜຶ່ງ ເຂົ້າໃນການວ່າຈ້າງພະນັກງານ ໂຄງການ.

ໂຄງການປັບປຸງຊີວິດການເປັນຢູ່ ແລະ ການປັບຕົວກັບການປ່ຽນແປງດິນຟ້າອາກາດ ຂໍເຊີນຜູ້ທີ່ສົນໃຈ ທີ່ມີຄຸນສົມບັດຄົບຖ້ວນຖືກຕ້ອງ ຕາມເງື່ອນໄຂ ທີ່ໄດ້ກຳນົດໄວ້ຂ້າງລຸ່ມ ຍື່ນເອກະສານສະໝັກດ້ວຍຕົນເອງ ຢູ່ທີ່ຫ້ອງການ ປຊກ ເມືອງ ທີ່ກຳລັງປະກາດຮັບສະໝັກ ຫຼື ສົ່ງທາງອີເມວ ສົ່ງມາຕາມທີ່ຢູ່ Email: **info.hr@clearlaos.org** ພ້ອມເອກະສານຕ່າງໆທີ່ກ່ຽວຂ້ອງ ເພື່ອເປັນບ່ອນອ້າງອີງ ດ້ານຄວາມຮູ້, ຄວາມສາມາດ ແລະ ປະສົບການ ການເຮັດວຽກຜ່ານມາ ທີ່ກ່ຽວຂ້ອງຂອງທ່ານ ເພື່ອມາຮັບຜິດຊອບວຽກງານດັ່ງກ່າວ ລາຍລະອຽດແຕ່ລະຕຳແໜ່ງທີ່ຕ້ອງການມີດັ່ງລຸ່ມນີ້:

1. **ຕຳແໜ່ງ ພະນັກງານວິສະວະກອນໂຄ່ງລ່າງປັບຕົວກັບການປ່ຽນແປງດິນຟ້າອາກາດຂັ້ນເມືອງ (DCRO-Eng)**
   ຈຳນວນ 03 ຕຳແໜ່ງ (ແຕ່ລະຕຳແໜ່ງແມ່ນຮັບຜິດຊອບວຽກ 2 ເມືອງ ໃນ 1 ແຂວງ)
   - ປະຈຳຢູ່ ເມືອງ ຜົ້ງສາລີ/ຍອດອູ ແຂວງຜົ້ງສາລີ
   - ປະຈຳຢູ່ ເມືອງ ງາ/ປາກແບງ ແຂວງອຸດົມໄຊ
   - ປະຈຳຢູ່ ເມືອງ ພູກູດ/ໜອງແຮດ ແຂວງຊຽງຂວາງ

➢ ຂໍ້ກຳນົດເງື່ອນໄຂເບື້ອງຕົ້ນ ຂອງຜູ້ສະໝັກທີ່ສາມາດຍື່ນສະໝັກໄດ້ ປະກອບມີດັ່ງນີ້:

- **ລະດັບທາງດ້ານການສຶກສາ:** ຢ່າງໜ້ອຍຮຽນຈົບປະລິນຍາຕີ ສາຂາວິສະວະກຳ/ການກໍ່ສ້າງ;
- **ປະສົບການການເຮັດວຽກຜ່ານມາ:** ມີປະສົບການເຮັດວຽກທີ່ກ່ຽວຂ້ອງຢ່າງໜ້ອຍ 5 ປີໃນເຂດຊົນນະບົດ, ສາມາດສຳຫຼວດ, ອອກແບບ, ປະເມີນ ແລະ/ຫຼື ການຊີ້ນຳພາກສະໜາມຂອງວຽກງານພື້ນຖານໂຄງລ່າງຂະໜາດນ້ອຍ; ມີປະສົບການຫຼາກຫຼາຍໃນການຈັດຕັ້ງປະຕິບັດໂຄງການທີ່ກ່ຽວຂ້ອງກັບການປັບຕົວໂດຍອີງໃສ່ລະບົບນິເວດ, ການຄຸ້ມຄອງນ້ຳໃນຊຸມຊົນ ແລະ ພື້ນຖານໂຄງລ່າງຊົນນະບົດ, ລວມທັງການປັບປຸງເສັ້ນທາງ, ໂຄງການຊົນລະປະທານຂະໜາດນ້ອຍ, ການສະໜອງນ້ຳໃນຊົນນະບົດ ແລະ/ຫຼື ອາຄານຊົນນະບົດຂະໜາດນ້ອຍ;
- **ມີມີຄວາມຊຳນານ ແລະ ມີຄວາມຮູ້ດ້ານຄອມພິວເຕີ:** MS Office, 3D Civil ແລະ ໂປຣແກຣມອອກແບບພື້ນຖານເຊັ່ນ: AutoCAD, Access, Photoshop;
- ມີໃບອະນຸຍາດຂັບຂີ່ (ລົດຈັກ, ລົດໃຫຍ່) ທີ່ບໍ່ໝົດອາຍຸ.

2. **ຕຳແໜ່ງ ພະນັກງານດ້ານການປັບໂຕກັບການປ່ຽນແປງດິນຟ້າອາກາດຂັ້ນເມືອງ (DCRO-Adaptation)**
   ຈຳນວນ 03 ຕຳແໜ່ງ (ແຕ່ລະຕຳແໜ່ງແມ່ນຮັບຜິດຊອບວຽກ 2 ເມືອງ ໃນ 1 ແຂວງ)
   - ປະຈຳຢູ່ ເມືອງ ຜົ້ງສາລີ/ຍອດອູ ແຂວງຜົ້ງສາລີ
   - ປະຈຳຢູ່ ເມືອງ ງາ/ປາກແບງ ແຂວງອຸດົມໄຊ
   - ປະຈຳຢູ່ ເມືອງ ພູກູດ/ໜອງແຮດ ແຂວງຊຽງຂວາງ

➢ ຂໍ້ກຳນົດເງື່ອນໄຂເບື້ອງຕົ້ນ ຂອງຜູ້ສະໝັກທີ່ສາມາດຍື່ນສະໝັກໄດ້ ປະກອບມີດັ່ງນີ້:

- **ລະດັບທາງດ້ານການສຶກສາ:** ຢ່າງໜ້ອຍຮຽນຈົບປະລິນຍາຕີ ສາຂາການຄຸ້ມຄອງສິ່ງແວດລ້ອມ, ປ່າໄມ້, ກະສິກຳ, ການປະມົງ ແລະ/ຫຼື ການລ້ຽງສັດນ້ຳ ຫຼື ສາຂາທີ່ກ່ຽວຂ້ອງ;

- **ປະສົບການການເຮັດວຽກຜ່ານມາ:** ມີປະສົບການຢ່າງໜ້ອຍ 3 ປີໃນການຈັດຕັ້ງປະຕິບັດໂຄງການທີ່ກ່ຽວຂ້ອງກັບການປັບຕົວກັບການປ່ຽນແປງດິນຟ້າອາກາດ, ການວາງແຜນນຳໃຊ້ ແລະ ຈັດຕັ້ງປະຕິບັດການນຳໃຊ້ທີ່ດິນໂດຍນຳໃຊ້ລະບົບນິເວດວິທະຍາ, ການຄຸ້ມຄອງປ່າໄມ້ຊຸມຊົນ, ການຄຸ້ມຄອງນ້ຳ, ຫຼື ພັດທະນາຊົນນະບົດ; ມີປະສົບການດ້ານການວາງແຜນແບບມີສ່ວນຮ່ວມ, ການຝຶກອົບຮົມ ແລະ ການລະດົມຊຸມຊົນໃຫ້ເຂົ້າຮ່ວມໃນການຈັດຕັ້ງປະຕິບັດກິດຈະກຳ;
- ມີຄວາມຮູ້ກ່ຽວກັບການປະຕິບັດວຽກດ້ານການປັບຕົວໂດຍນຳໃຊ້ລະບົບນິເວດວິທະຍາ, ວິທີແກ້ໄຂບັນຫາໂດຍນຳໃຊ້ທຳມະຊາດ, ແລະ ເຕັກນິກການຄຸ້ມຄອງນ້ຳຂະໜາດນ້ອຍ;
- **ມີທັກສະນຳໃຊ້ຄອມພິວເຕີ:** ສາມາດນຳໃຊ້ໄດ້ໃນລະດັບດີ ລວມທັງຄວາມສາມາດໃນການໃຊ້ໂປຼແກຼມພື້ນຖານ (Microsoft Office) ແລະ ເຄື່ອງມືຕິດຕາມກວດກາດິຈິຕອນ (ຕົວຢ່າງ: ໂກໂບ້ທູນບ໋ອກ);
- **ພາສາ:** ສາມາດເວົ້າພາສາອັງກິດໄດ້ດີ; ສາມາດເວົ້າພາສາທ້ອງຖິ່ນທີ່ນຳໃຊ້ຢູ່ພາຍໃນເມືອງດັ່ງກ່າວຈະພິຈາລະນາເປັນພິເສດ;
- ມີໃບອະນຸຍາດຂັບຂີ່ (ລົດຈັກ, ລົດໃຫຍ່) ທີ່ບໍ່ໝົດອາຍຸ.

- **ເອກະສານຍື່ນສະໝັກ ປະກອບມີ:**
  - ໃບຄຳຮ້ອງຍື່ນສະໝັກງານ: ໃຫ້ລະບຸລະອຽດຊື່ຕຳແໜ່ງທີ່ສະໝັກ, ສະຖານທີ່ຫ້ອງການ ທີ່ສະເໜີເຂົ້າປະຈຳການ. ພ້ອມທັງປະສົບການຜ່ານມາທີ່ຄ້າຍຄືກັບວຽກທີ່ຍື່ນສະໝັກ, ລາຍຊື່ ແລະ ເບີໂທລະສັບ ຂອງຜູ້ທີ່ສາມາດຢັ້ງຢືນໃຫ້ທ່ານ ແລະ ທາງໂຄງການສາມາດສອບຖາມໄດ້ ປະມານ 3 ທ່ານ;
  - ຊີວະປະຫວັດຂອງຜູ້ຍື່ນສະໝັກ ພ້ອມຮູບຖ່າຍ (ລະບຸລະອຽດ ກ່ຽວກັບລະດັບການສຶກສາ ແລະ ປະສົບການເຮັດວຽກຜ່ານມາ);
  - ສຳເນົາໃບປະກາດຈົບການສຶກສາ ແລະ ໃບຄະແນນ, ໃບຢັ້ງຢືນຜ່ານການຝຶກອົມຮົມຕ່າງໆ;
  - ສຳເນົາໃບຢັ້ງຢືນການເຮັດວຽກຜ່ານມາ ວຽກທີ່ຄ້າຍຄືກັບວຽກນີ້, ໃບແຈ້ງໂທດ, ໃບຢັ້ງຢືນທີ່ຢູ່, ບັດປະຈຳຕົວ,
  - ໃບອະນຸຍາດຂັບຂີ່ (ລົດຈັກ, ລົດໃຫຍ່) ທີ່ບໍ່ໝົດອາຍຸ.

1. ຂໍ້ມູນເພີ່ມເຕີມ ລວມທັງຂໍ້ກຳນົດເງື່ອນໄຂການອ້າງອີງຕ່າງໆ ທ່ານສາມາດພົວພັນເອົາໄດ້ ໃນເວລາເຮັດວຽກ ນັບແຕ່ເວລາ 08:00 ໂມງ ຫາ 16:00 ໂມງ, ແຕ່ວັນຈັນ ເຖິງ ວັນສຸກ ທີ່ຫ້ອງການ ປຊກ ສູນກາງ, ຕັ້ງຢູ່ໃນຫ້ອງວ່າການລັດຖະບານ, ບ້ານສີສະຫວາດ, ເມືອງຈັນທະບຸລີ, ນະຄອນຫລວງວຽງຈັນ, ໂທ: 021 261 479 - 80 ຕໍ່ 105 ຫລື ເຂົ້າເບິ່ງໃນເວັບໄຊ້ ຂອງໂຄງການທີ່: http://clearlaos.org/vacancy.

2. ເອກະສານຍື່ນສະໝັກ ຕ້ອງສົ່ງເປັນລາຍລັກອັກສອນ ດ້ວຍຕົນເອງ ສົ່ງທາງອີເມວ ທີ່: info.hr@clearlaos.org ຫລື ສົ່ງທີ່ຫ້ອງການ ປຊກ ເມືອງ ທີ່ກຳລັງປະກາດຮັບສະໝັກຕຳແໜ່ງງານດັ່ງກ່າວ. ຫ້ອງການໂຄງການ ປຊກ ຈະພົວພັນຫາຜູ້ທີ່ຖືກຄັດເລືອກທີ່ເໝາະສົມທີ່ສຸດ ທາງອີເມວ/ໂທລະສັບ ພາຍຫລັງທີ່ໄດ້ຮັບອະນຸມັດແລ້ວ, **ວັນທີປິດຮັບເອກະສານຍື່ນສະໝັກແມ່ນວັນທີ 16 ມີນາ 2026.**

ນະຄອນຫລວງວຽງຈັນ, ວັນທີ 20 ກຸມພາ 2026.

ຮອງ. ຜູ້ອຳນວຍການ

ປອ. ວົງປະພັນ ມະນີວົງ